# ນິຍາຍວັດສີສິງ

ຄັດກ່າຍຈາກເອກະສານໃບລານ

ໂດຍ

**ມະຫາບຸນຍົກ ແສນສຸນທອນ**

ຈັດພິມໂດຍ

ໂຄງການປົກປັກຮັກສາໜັງສືໃບລານລາວ

( ການຮ່ວມມື ລາວ-ເຢຍຣະມັນ )

1996

# ນິຍາຍວັດສີສິງ

ຄັດກ່າຍຈາກເອກະສານໃບລານ

ໂດຍ

## ມະຫາບຸນຍົກ ແສນສຸນທອນ

ຈັດພິມໂດຍ

ໂຄງການປົກປັກຮັກສາໜັງສືໃບລານລາວ

( ການຮ່ວມມື ລາວ-ເຢຍຣະມັນ )

1996

# ນິຍາຍວັດສີສົງ

ຮິບໂຮມໂດຍ

**ມະຫາບຸນຍົກ ແສນສຸນທອນ**

© ສະຫງວນ ລິຂະສິດ

ອອກແບບໜ້າປົກ : *ຄຳມັກ ວົງສັກດາ*

ຄອມພິວເຕີ : *ຄຳມັກ ວົງສັກດາ*

*ມາລີ ທອງທຸມມາ*

ຈັດພິມໂດຍ

ໂຄງການປົກປັກຮັກສາໜັງສືໃບລານລາວ

ການຮ່ວມມື ລາວ-ເຢຍຣະມັນ

ພິມທີ່ ໄຜ່ໜາມການພິມ

ຕາມ ທບ 55/ພທປ 260796

ພິມເທື່ອທີໜຶ່ງ 1996

ຈຳນວນ 2.000 ຫົວ

**❀ ຈັດພິມເພື່ອແຈກຢາຍ**

# ຄຳນຳ

ປື້ມທີ່ທາງໂຄງການປົກປັກຮັກສາໜັງສືໃບລານລາວ ໂດຍການຮ່ວມມື ລາວ-ເຢຍຣະມັນ ໄດ້ຈັດພິມເພື່ອເປັນປື້ມອ່ານທີ່ໃຫ້ປະໂຫຍດໃນການ ລະບາຍອາລົມ ແລະທັງເປັນການຄົ້ນຄວ້າ ແລະ ໃຫ້ແນວຄິດສັງຄົມ ສົມທຽບສະໄໝບູຮານ ແລະ ປັດຈຸບັນ.

ເຊິ່ງຜູ້ປະລິວັດ ຄື ທ່ານ ອາຈານມະຫາບຸນຍົກ ແສນສຸນທອນ ໄດ້ອະທິ ບາຍໄວ້ວ່າ ຍ້ອນການເກັບເລັກຜະສົມນ້ອຍ ຈາກໃບລານຫລາຍວັດ ຫລາຍທ້ອງຖິ່ນມາລວມກັນ ພິມເປັນຫົວ.

ພວກເຮົາເຫັນວ່າ ການຄົ້ນຄວ້າຫາຕົ້ນແບບ ແລະ ມາສົມທຽບໃສ່ກັນ ຈາກທາງພາກເໜືອ ພາກກາງ ແລະ ໂດຍສະເພາະຢູ່ຫໍສະໝຸດແຫ່ງຊາດ ແລ້ວກໍເອົາຫົວເລື່ອງເດີມນັ້ນມາຈັດລວມເຂົ້າກັນໃນຫົວໜຶ່ງ ເຫັນວ່າບໍ່ແມ່ນເລື່ອງງ່າຍ ຕ້ອງມີຄວາມຮູ້ ແລະ ເຂົ້າໃຈເນື້ອໃນເດີມຂອງເລື່ອງ ແລະ ຄວາມເວົ້າເກົ່າທີ່ຜ່ານໄລຍະມາຫລາຍສະຕະວັດແລ້ວ.

ໃນນາມໂຄງການ ຂໍຂອບໃຈຕໍ່ທ່ານບຸນຍົກ ແສນສຸນທອນ ທີ່ໄດ້ອຸດສາຫະພາກພຽນ ເກັບກຳຄຳຄະຕິເຕືອນໃຈ ແລະ ນິດນິຍາຍທຳມະ ທີ່ກ່ຽວຂ້ອງກັບຮີດຄອງປະເພນີ ມາພິມເຜີຍແຜ່ ເພື່ອການ

ປະກອບສ້າງສັງຄົມປັດຈຸບັນ ໃຫ້ດຳເນີນໄປຕາມແບບທີ່ອອນໂຍນ ນີ້ມນວນ ຊວນໃຫ້ຜູ້ໄດ້ພົບເຫັນປະທັບໃຈ ແລະ ເປັນວັດທະນະທຳອັນດີງາມຂອງຊາດລາວເຮົາ ຕໍ່ສາຍຕາຕ່າງປະເທດ ຫວັງວ່າຜົນງານການຄັດກ່າຍ ແລະ ຂຽນອອກຈາກໃບລານມາເປັນລາວປັດຈຸບັນຂອງທ່ານ ຄົງຈະມີອີກບໍ່ຢຸດຢັ້ງ.

ສຸດທ້າຍ ຫວັງວ່າປຶ້ມຫົວນີ້ ຄົງຈະໃຫ້ຄະຕິທຳຄຳສອນທີ່ເປັນອຸທາຫອນ ສອນໃຈ ຕໍ່ບັນດາທ່ານທີ່ໄດ້ອ່ານ ແລະ ໃຊ້ໃຫ້ເກີດປະໂຫຍດແກ່ຕົນເອງ ແລະ ສັງຄົມ.

ວຽງຈັນ, ວັນທີ 6 ກໍລະກົດ 1996

ຫົວໜ້າໂຄງການປົກປັກຮັກສາໜັງສືໃບລານລາວ

**ບຸນເລີດ ທຳມະຈັກ**

# ຄຳນຳ

## *ຂອງຜູ້ຮຽບໂຮມ*

ຂ້າພະເຈົ້າເຄີຍໄດ້ຄັດກ່າຍວັນນະກຳບູຮານ ປະເພດຄຳສອນ ແລະ ສະເໜີໂຄງການປົກປັກຮັກສາໜັງສືໃບລານລາວ ມາພິມຈຳນວນໜຶ່ງ ເຊິ່ງແມ່ນການເກັບເລັກ ຜະສົມໜ້ອຍ ຈາກຫ້ອງກຸ່ມຕາມທີ່ຂ້າພະເຈົ້າໄດ້ລົງໄປຕິດແທດກັບໜ່ວຍສຳຫລວດ ແລະ ປົກປັກຮັກສາໃບລານ ທັງເຂດກຳແພງນະຄອນ, ແຂວງວຽງຈັນ, ຫລວງພະບາງ, ໄຊຍະບູລີ ແລະ ອຸດົມໄຊ ໃນໄລຍະ 4 ປີຜ່ານມາ. ການຈັດກ່າຍຈາກເອກະສານເດີມ ຄືໃບລານ ແລະ ເຈ້ຍສາ, ພັບດຳ ກໍຍ່ອມມີການຂາດຕົກບົກພ່ອງ ຍ້ອນສະພາບຂອງວັດຖຸ ແລະ ຜູ້ຂຽນຕົ້ນສະບັບ ບໍ່ຄ່ອຍໄດ້ຮຽບຮຽງຄືນ ຫລືບໍ່ກໍໃບລານຂາດ ຊຳລຸດໄປແດ່ແລ້ວກໍມີ.

ປຶ້ມທີ່ທ່ານໄດ້ອ່ານຢູ່ນີ້ ກໍເປັນອີກປະເພດໜຶ່ງ ຂອງເອກະສານໃບລານ ຂ້າພະເຈົ້າເຫັນວ່າ ເປັນນິຍາຍທຳມະ ທີ່ມີຄະຕິສອນໃຈ ໂດຍໃຫ້ຊື່ວ່າ ນິຍາຍລັດສີສິງ ພິມເປັນຮູບເຫລັ້ມດຽວຈາກອັກສອນລາວບູຮານ, ອັກສອນທຳ ແລະ ບາງຜູກກໍແມ່ນອັກສອນຂອມ (ຂະແມບູຮານ) ຊຶ່ງມັກເຫັນໃນໃບລານ ມາເປັນອັກສອນລາວປັດຈຸບັນ ເພື່ອນັກອ່ານ ນັກປະພັນ ຊາວໜຸ່ມເຍົາວະຊົນ ສະໄໝນີ້ ສາມາດອ່ານໄດ້. ສ່ວນເນື້ອໃນ ແລະ

ຄຳເວົ້າ ຄຳສັບ, ສຳນວນຂອງກາບ, ກອນ, ໂຄງສານ ທີ່ກ່າຍມາ ແມ່ນບໍ່ໄດ້ດັດແປງ ອາດຈະເຮັດໃຫ້ທ່ານຜູ້ອ່ານ ຄົງຈະສັບສົນເລັກນ້ອຍ ເພາະຄຳສັບ, ສຽງ ສຳນຽງຂອງຄົນບູຮານບາງອັນພວກເຮົາກໍລືມໄປແລ້ວ ຈຶ່ງບໍ່ເຂົ້າໃຈກໍມີ.

ປື້ມນິຍາຍທຳນີ້ ກືວ່າຄົນບູຮານ ໄດ້ຄົ້ນຄວ້າ ລິດຈະນາມາຈາກ ພາສາປາລີ ສັນສະກິດ ມາປະດິດຄິດແຕ່ງ ເປັນຄວາມລາວ ບາງຄຳກໍຮັກສາໄວ້ເພື່ອໃຫ້ຮູ້ວ່າຕົ້ນເດີມແມ່ນປາລີ ເຊັ່ນໃນບົດຂຶ້ນຕົ້ນຂອງເລື່ອງນີ້.

ຄະຕິທຳຄຳສອນ ທີ່ຄົນເກົ້າບູຮານ ເພິ່ນໃຊ້ສະຕິປັນຍາປະດິດຄິດແຕ່ງ ເພື່ອສອນໃຫ້ລູກຫລານ ຜູ້ເກີດໃຫມ່ໃຫຍ່ລຸນແມ່ນອີງໃສ່ສຸພາສິດ ຄຳສອນ ທາງພະພຸດທະສາສະຫນາແລ້ວບວກໃສ່ຮີດຄອງປະເພນີຂອງຄົນໃນສະໄຫມນັ້ນ.

ປັດຈຸບັນຄຳເຫັນຂອງນັກຄົ້ນຄວ້າ ແລະ ຜູ້ອ່ານບາງທ່ານກືວ່າຄະຕິທຳຄຳສອນເຫລົ່ານີ້ ມັນຊັກຊ້າຫລ້າຫລັງ ບໍ່ທັນຍຸກທັນສະໄຫມນຳເພິ່ນ ມັນແມ່ນສະໄຫມເກົ່າ ບ້ານເມືອງຍັງບໍ່ຈະເລີນ ປັດຈຸບັນຍຸກອະວະກາດ ດາວທຽມ ເອີ້ນວ່າໂລກາພິວັດແລ້ວ; ຂ້າພະເຈົ້າຄິດວ່າເຮົາບໍ່ຄອຍໄດ້ສົນໃຈ ແລະ ຄົ້ນຄວ້າຄຳເວົ້າ, ຄຳສັບ, ສຳນວນ ແລະ ເນື້ອໃນໃຫ້ລັກແນກອນ ເພາະຂອງທີ່ເຮົາມີມາແຕ່ບູຮານ ເຮົາຄິດກືຕໍ່າ ຫມິ່ນປະຫມາດ ຫັນຫນ້າແລະ ແນວຄິດໃສ່ແຕ່ວັດຖຸນິຍົມ ຄືເຫັນແຕ່ຄ່າທາງວັດຖຸ

ຫລາຍກວ່າຈິດໃຈ ໃນທີ່ສຸດ ເມື່ອວັດຖຸທາກຈະເລີນໄປສຸດຂີດແລ້ວ ແຕ່ຈິດໃຈບໍ່ໄດ້ພັດທະນາ ອາດຈະເບິ່ງໂລກບໍ່ພົບກໍ່ກໍມີ.

ປັດຈຸບັນການປຶກສາຫາລື ການສົມມາຄາຣະວະ ແລະການອຳນວຍ ຂໍຄຸນນຳບຸກຄົນຜູ້ທີ່ເຮົາໂຄຣົບນັບຖື ແມ່ນຮີດຄອງອັນດີງາມ ຄວນປົກປັກຮັກສາ ເພາະຜົນໄດ້ກໍຄືຄວາມດີ ຄວາມມີນ້ຳໃຈຕໍ່ກັນ ຜູ້ທີ່ເຄີຍມີອາຄາດບາດຫມາງ ເມື່ອກີກຜູ້ຢູ່ໃຕ້ຄວາມດູແລ ໃຫ້ຄວາມໂຄຣົບ ກໍຍ່ອມມີຈິດໃຈອ່ອນໂຍນຕອບແລະ ລຶດໄດ້ ວາງໄດ້ຄວາມພະຍາບາດ ອາຄາດຈອງເວນຊຶ່ງກັນ ແລະ ກັນ ຮູ້ໃຫ້ອະໄພແກ່ກັນ ດັ່ງສຸພາສິດທາງທຳບົດຫນຶ່ງວ່າ : "ປູຊິໂຕ ລະພະເຕ ປູຊັງ ວັນທະໂກ ປະຕິວັນທະນັງ".

<u>ຫມາຍຄວາມວ່າ:</u>

"ຜູ້ບູຊາ (ໂຄຣົບ) ຍ່ອມໄດ້ຮັບການບູຊາຕອບ".

"ຜູ້ນ້ອມໄຫວ້ (ໂຄຣົບ) ຍ່ອມໄດ້ຮັບການໄຫວ້ຕອບ".

ກໍສະແດງວ່າ ການໃຫ້ອັນຫມາຍເຖິງໃຫ້ດ້ວຍກາຍໃຫ້ດ້ວຍວາຈາ ຫລືໃຫ້ດ້ວຍໃຈ ເປັນຕົ້ນແມ່ນການຊ່ວຍເຫລືອທາງເຫື່ອແຮງ ຊ່ວຍເຫລືອໃນການປຶກສາໂອ້ລົມ ແລະ ຊ່ວຍເຫລືອແນະນຳທາງຄວາມຄິດ ແລະ ເປັນກຳລັງໃຈນັ້ນ ທ່ານວ່າເຮົາປະພຶດດີ ປະຕິບັດດີ ທາງກາຍ ທາງວາຈາ ແລະ ແນວຄິດຈິດໃຈ. ຜົນໄດ້ກໍຄືຄວາມຮັກແພງ ສາມັກຄີຊ່ວຍເຫລືອເກື້ອກູນຍ່ອມມີປະໂຫຍດຕໍ່ຕົນເອງ ແລະ ສັງຄົມອີກນຳ.

ຂ້າພະເຈົ້າເປັນຜູ້ຄັດລອກອອກມາຈາກເອກະສານໃບລານ ກ່າຍເປັນພາສາລາວ ແລ້ວກໍສະເຫນີໂຄງການອະນຸລັກໃບລານ ກະຊວງກະແຫລງຂ່າວ ແລະວັດທະນະທຳ ຈັດພິມຄະຕິທຳຄຳສອນ ເລັກໆນ້ອຍໆ ເພື່ອໃຫ້ເປັນທຳມະທານ ອັນຫນຶ່ງທາງດ້ານ ຄວາມຮູ້ຄວາມສະຫລາດ ແລະ ກື່ວ່າໃຫ້ທຳມະເປັນທານ ເພື່ອອະນຸຊົນລູກຫລານສືບໄປ, ຂ້າພະເຈົ້າບໍ່ປາສະຈາກໄດ້ ການຊ່ວຍເຫລືອຂອງໂຄງການ, ພະນັກງານຄອມພິວເຕີ ພິມບົດ ແລະ ການຕິຈັດລຽງ ເພື່ອພິມເປັນເຫລັ້ມ, ພ້ອມນີ້ ກໍແມ່ນ ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຫົວຫນ້າໂຄງການ, ທີ່ປຶກສາໂຄງການ ຕະຫລອດຮອດລັດຖະບານເຢຍຣະມັນ ແລະ ຫນ່ວຍງານຕ່າງໆ ທີ່ສະຫນັບສະຫນູນທຶນຮອນໃນການຈັດພິມ ມານະທີ່ນີ້ ບຸນໃດ ກຸສົນໃດ ທີ່ເພິ່ງຈະໄດ້ຮັບຈາກປຶ້ມຫົວນີ້ ຂ້າພະເຈົ້າຂໍໃຫ້ຄຸນຄວາມດີ ແລະ ບຸນກຸສົນນັ້ນ ຈົ່ງແຜ່ຜາຍ ແຈກຢາຍ ໃຫ້ບັນດາ ທ່ານ ຜູ້ທີ່ກ່າວມານີ້ ແລະ ທ່ານຜູ້ສົນໃຈ ນຳໄປອ່ານ ໄປປະຕິບັດ ຈົ່ງສົມຄວາມມຸ່ງມາດປາຖະຫນາ ຂອງພວກເຮົາ ຫມົດທຸກໆຄົນ.

ຫ້າມຈຳໜ່າຍ

ວຽງຈັນ, ວັນທີ 6 ກໍລະກົດ 1996

ມະຫາບຸນຍົກ ແສນສຸນທອນ
ທີ່ປຶກສາໂຄງການ

# ນິຍາຍວັດສີສີງ

(ຈາກຫນັງສືຜູກໃບລານວັດໃຫມ່ສຸວັນນະພູມາລາມ
ຫລວງພະບາງ)

ນະໂມ ຕັດສະ ພະຄະວະໂຕ ອະຣະຫະໂຕ
ສັມມາ ສັມພຸດທັດສະ

ນະມາມິ ຣັດຕະນະໄຕໂຍ  ສາທະໂວ
ດູລາສັບປຸຣິສາ  ທັງຫລາຍ
ສວນດັ່ງ ສົມເດັດພະເປັນເຈົ້າ  ຕົນຢູ່ເກົ້າພູບານ
ເມື່ອເຈົ້າຍັງ  ທົວລະມານ
ໃນປ່າເຊຕະວັນນະ  ອາຣາມເຂດ
ເພດຜາລົບ  ເຊິ່ງພິກຂຸຕົນຫນຶ່ງ
ອັນບໍ່ປາສະຈາກເມຍເກົ່າ  ມາເລົ່າໂລມຕາ
ເຈົ້າກໍຄະນຶງຫາ  ຄືຄ້ອຍໆ
ເມື່ອນັ້ນ ພະຍອດສ້ອຍ  ສັບພັນຍູ
ຕົນເປັນຄູສັ່ງສອນໂລກ  ຈຶ່ງກ່າວໂສກເທສະໜາວ່າ:
ອະຕິເຕກາເລ ສັກໂກອິນທາ  ດັ່ງນີ້ເປັນເຄົ້າ

ສັດກາ ອັນວ່າ ສັບພັນຍູເຈົ້າ
ປຸດສີ ກໍກາມ ພິກຂຸນັ້ນດ້ວຍຄໍາວ່າ
ດູຣາ ທ່ານ ຕະວັງ ອັນວ່າທ່ານນີ້
ບໍ່ຍິນດີໃນສາສະໜາ ແຫ່ງກູອັນຊະລື
ສັດຈັງ ເຖຣະເຈົ້າ ກໍຮັບເອົາດ້ວຍຄໍາວ່າ
ຂ້າກໍບໍ່ຍິນດີ ເຊິ່ງສາສະໜາແທ້ ກໍຂ້າແລ
ປຸດສີ ພະພຸດທະເຈົ້າ ຈຶ່ງກາມວ່າດັ່ງນີ້
ຕະວັງອັນວ່າທ່ານ ກໍຍັງເປັນນັກບວດ ດັ່ງລື
ຜູ້ໃດຈຶ່ງມາໃຫ້ທ່ານບວດ ດ້ວຍຕັນຫານີ້ຈາ
ບູຮານເມຍເກົ່າ ຫາກມາເລົ່າໂລມຕາ
ເຫດວ່າ ຕັນຫານັ້ນ ຫາກມາຈູງຈ່ອງໄວ້
ໃນຫ້ອງແຫ່ງ ສິງສານ ນີ້ແລ້ວ
ພະຕົນແກ້ວຈຶ່ງຊັກອຸປະມາ ໄຂຄໍາຈາສອນສັ່ງ
ຍັງມະຫາເຖຣະເຈົ້າ ວ່າດັ່ງນີ້ແລ້ວ
ຈຶ່ງກ່າວວ່າ: ດູຣາພິກຂຸຕົນຍົດຍິ່ງ
ມີນາງແກ້ວກິ່ງໂສມງາມ ມາຈາກາມດ້ວຍລວງ
ກາມກິເລດ
ໃຫ້ເສຍເພດບໍ່ມີນານ ໃຫ້ເສຍຊານດີບໍ່ຄາດແຄ້ວ
ຊື່ວ່ານາງແກ້ວອະລັມມະພູສາ ມີຜະຍາແວນສະຫລາດ
ໃຫ້ເຈົ້າ ຄລາດຄລາສິນ ບໍ່ຍິນດີໃນຄອງຜນວດ
ໃຈເຈົ້າລວດລືມເສຍ ນອນນໍາເມຍຂອງເກົ່າ
ເປັນເຜົ່າ ຜົ້ງ ເຫິງນານ ມີປະມານສາມປີທ່ຽງແທ້

ເປັນເວນເຈົ້າ ແຕ່ພາຍຫລັງ
ພະແກ່ນໄທ້
ບຸນນຳຊູບໍ່ຂາດ
ຈິ່ງກູ່າວເປັນຄາກາວ່າດັ່ງນີ້
ຍັງມີພະຍາຕົນໜຶ່ງ
ໄດ້ສະເວີຍຣາດສົມບັດ
ໃນເມືອງພາລານະສີ
ເຈົ້າຈິ່ງໄດ້ມາເກີດ
ຢູ່ໃນເມືອງພາລານະສີ
ເຈົ້າກໍເຖິງໄວຍະໂສດ
ກໍຈິ່ງໜີມາບວດ

ຂົນຂວາຍຫາຫົວມັນ
ທຸກວັນຄືນສູ່ເຊົ້າ

ອາກະ ໃນກາລະຍາມນັ້ນ
ຍັງມີແມ່ກວາງຕົວໜຶ່ງ
ປີ່ນໜ້າສູ່ສາລາ
ເປັນເຫດຮ້ອນໃນຕົນ
ໄດ້ກິນຫຍ້າ
ແຫ່ງເຈົ້າລັດສີ
ພະຍອດສ້ອຍ

ມາຈົບຈຳຈອງໃຫ້
ຄຶດຮູ້ ພາຍລຸນ
ພະບາດໄທ້ຮ່ຳໄຮໄປມາ
"ພົມມະທັດຕະຣາຊາ"
ຊື່ວ່າພົມມະທັດ ຕະຣາດ
ເປັນເຈົ້າກະສັດ
ຊ້ອຍໂຊດ
ໃນກະກຸນພາມຜູ້ປະເສີດ
ສາໂລດ
ບໍລະບວນແທ້ດີຫລີ
ສ້າງພະບວດຢູ່ໃນປ່າໄມ້
ຫິມະວັນ
ແລະລູກໄມ້ມາໄວ້ເປັນຈັງຫັນ
ເຈົ້າກໍເອົ້ານິໂລດ ຢູ່ສຳລານ
ກໍມີແລ
ເອໂກ ມິກໂຄ
ເຄີຍສະແວງແອວກິນຫຍ້າ
ວຽນໄປມາ ຂອບເຂດ
ແມ່ກວາງສົນລະວົນຊັກໄຊ້
ແລະ ນ້ຳກາມ
ທຣິງຄັພດີຊື່ນຊ້ອຍ
ບຸນຂວາງ

ແມ່ກວາງຫນັກຫນ່ວງທ້ອງ ເປັນເຫດຕ້ອງເວຣາ
ແຕ່ກູມາຢູ່ ໃນຄີລີປ່າກວ້າງ
ບໍ່ມີຜູ້ອ້າງອາໄສ ກໍທໍ່ຕົນດຽວ ກູຫາກຢູ່
ຊະພູຫນ້າເຊື່ງຣັດສີ ກໍບໍ່ຫນີໄປໄກປະເທດທ້ອງ
ໃນແຫ່ງຫ້ອງ ອາສົມແລນາ
ມັນຄະນຶງ ດັ່ງນີ້ແລ້ວ ບໍ່ມີນານ
ແມ່ກວາງມານປະສູດແລ້ວ ເປັນລູກແກ້ວລຳຊາຍ
ງາມໂສມສາຍເລີດແລ້ວ ໃຫ້ແຈ້ວໆ ເປັນຄົນ
ກາງໄພສົນ ທີມະເວດ
ໃກ້ແທບເຂດ ອາສົມບົດສາລາ
ວາງບຸດຕາລູກແກ້ວ ປະປ່ອຍແລ້ວຫນີໄປ
ໃນໄພສົນກາງປ່າ ລັດສີເຈົ້າຄວ່າໄປມາ
ທີສວາ ກໍເຫັນພະບຸດຕາ ລູກແກ້ວ
ໃຫ້ແຈ້ວໆ ໃກ້ເຂດອາສົມ
ພະລັດສີ ກໍຊົມຄືລ້ອຍໆ ຮັກອ່ອນນ້ອຍສາຍໃຈ
ພະບົວໄຂ ສິດທິລາດ
ພະຈິ່ງປົງໂອວາດ ຫານາມ
ຕາມອາຈານ ກ່າວໄວ້
ຊື່ວ່າ "ແກ້ວແກ່ນໃຫ້ ຣັດສີສິງ"
ເຫດວ່າມີຈຸລາທັງຄູ່ ຕັ້ງຢູ່ຫນ້າສອງອັນ
ເປັນກັນແກວດັ່ງແກ້ວ ງາມເລີດແລ້ວໃສແສງ
ພະຈອມແພງຕົນພໍ່ ຮັກຣັດສີນ້ອຍ ຫນໍ່ກະສັດຕີ

ພະກໍສອນປາລະມີທຳທຸກສິ່ງ ຮູ້ແຈ້ງຍິ່ງທຸກອັນ
ພະຈອມທັບໃຫ້ບວດ ສ້າງພະຫນວດ ເປັນຣັດສີ
ພະກະສັດຕີຫນຸ່ມນ້ອຍ ຫນ້າຊື່ນຊ້ອຍໂສພາ
ພະກະສັດຕາຕົນພໍ່ ເຈົ້າກໍເກົ້າຊວດພົ້ນເວລາ
ກໍຈິ່ງເອົາພະກະສັດຕາຕົນນ້ອຍ ຫນ້າຊື່ນຊ້ອຍໂສມງາມ
ເອົາໄປສູ່ບຸບຜາສວນດອກໄມ້ ຊື່ວ່າ ບາລີ
ບານຈູມຈີລະໄຫມ່ ທຳເພດໃສ່ສະເຫມີຄົນ
ກົນຫົບສຸບສອດແລ້ວ ຕ້າງແກ້ວໃສ່ໃບຫູ
ເປັນທີ່ມຸທຸໃຈ ອ່ອນນ້ອຍ
ທຸກທີ່ພ້ອມ ສະເຫມີດັ່ງນາງສວັນ
ເປັນທີ່ພະຈອມທັບ ກະສັດຮັກຣ່
ລູກນ້ອຍຫນ່ ຣັດສີສິງພໍ່ເອີຍ
ຄົນຍິງໃນໂລກນີ້ ເອົາຍອມທຳໂທດໃຫ້ຈິບຫາຍ
ໃຫ້ເຈົ້າເອົາໃຈກາຍຫນີຈາກ ລືບ້ວງບາດນາງຄານ
ບາງຜອງກະທຳມາຍາ ໃຫ້ເສຍປະໂຫຍດ
ບາງຜອງກະທຳໃຫ້ເປັນໂທດ ເສຍວັດກຸເອົ້າຂອງ
ບາງຜອງກະທຳໃຫ້ເສຍສິນ ແລະ ຊານແລ້ວ
ລູກແກ້ວຢ່າໄດ້ຍິນດີ ເຈົ້າຢ່າໄດ້ມີໃຈຈິງຣ່
ຈິດຕັ້ງຕໍ່ຍັງອິດກີ ອັນມັນມີຢູ່ໃນແຫລ່ງຫລ້າ
ແກ້ວກຳພ້າ ຈົ່ງຈື່ຈຳ ຄຳສອນພໍ່ເນີ
ເຈົ້າຢ່າໄດ້ອາວອນຄຶດຮ່ຳ ໃຈຄຶດຕໍ່ຄຳຮ້າຍ ແລະ ຄຳດີ
ພະລັດສີສັ່ງໄວ້ໃຫ້ໂອວາດຄຳດີ ໃນຄຳພີອັນເລີດແລ້ວ

ພະຕົນແກ້ວ ກໍຈຸດຕິຈາກເມືອງຄົນ
ໄດ້ເອົາຕົນເມືອເກີດຊັ້ນຟ້າເລີດ ເມືອງສະຫວັນ ກໍມີແລ.
ຕະໂຕ ເມື່ອນັ້ນ ປັ້ນພະລັດສີສິງຕົນນຸ່ມນ້ອຍ
ຫນ້າຊື່ນຊ້ອຍນົງຄານ ຢູ່ເຫນືອສະການອັນພິເສດ
ໃນເຂດຫ້ອງທີມະພານ ມີຕັບປະອຸດົມວິເສດ
ສັງວະຣະເພດເປັນອັນດີ ຣັດສີທັງຫລາຍເຫັນກ່າວອ້າງ
ເປັນເຂດກວ້າງອັດສະຈັນ ທີນບັນດຸກັມພະລະສີລາບາດ
ແທ່ງອິນທາທີເວດລວດມ້າງ ແຕ່ຂອກເທົ້າເກືງກາງ
ກົດນັ້ນອິນທາຕົນຍົດຍິ່ງ ຈິ່ງລະນຶກຄຶດໃນໃຈວ່າ
ຜູ້ໃດຈັກມາຊິງແທ່ນແກ້ວ ແທ່ງກູອັນວິເສດ
ກໍຈິ່ງທອດພະເນດຫລ່ຳຫລິງໄປ ສຸດວິໄສພາຍຕ່ຳ
ກໍຈິ່ງເຫັນຣັດສີນ້ອຍພ່ຳ ກະທຳການ
ສ້າງສົມພານເຣວຣິບເຣັ່ງ ບຸນເຈົ້າເປັ່ງເຕັມໄປ
ອິນທາຄອຍແຕ່ໄກ ຫລິງລ່ຳ
ກໍຈິ່ງເຫັນຣັດສີພ່ຳ ເພັງພາວະນາ
ມີເຕຊາອັນແກ່ກ້າ ອິນທາເຈົ້າຟ້າ ຈິ່ງເທິງສາ
ມີຄຳວາຈາ ກີ່ກ້ອຍ
ບອກແກ່ນາງນາດນ້ອຍ ສາວສະຫວັນ
ໃຫ້ລົງໄປພະລັນ ຢ່າຊ້າ
ໃຫ້ນ້ອຍກຳພ້າ ເສຍສິນຄວນແລ
ສັກໂກ ເມື່ອນັ້ນ ປັ້ນອິນທາ ຮ່ຳເພີງທາເຫັນແລ້ວ
ກໍຈິ່ງບອກນາງແກ້ວ ລົງໄປ

ສູ່ວິໄສພາຍຕ່ຳ ໃຫ້ຍ່ຳຍີເສຍ ຍັງສິບ ແລະ ຊານແກ້ວ
ຄັນວ່າຮ່ຳເພິງແລ້ວ ບໍ່ມີນານ
ອິນທາຈິ່ງຫລິງດູນາງ ນິງຄານຟາກຟ້າ
ອັນໄດ້ສອງຕື້ປາຍ ທ້າລ້ານເປັນຕາ
ກໍຈິ່ງເຫັນນາງ "ອະລັມພູສາ" ແວນອາດ
ເພື່ອຈັກມ້າງ ຣັດສີຄລາດ ຄລາສິບ ກໍມີແລ
ຕະມັດກັງ ປະກາເສນໂຕ ສັຄກຸາ ອາທະ
ພະພຸດທະເຈົ້າຈັກສຳແດງ ນິທານແຫ່ງພະຍາອິນ
ອັນໃຊ້ນາງອະລັມພູສາ ລົງມາມ້າງສິບ ແລະ ຊານ
ໃຫ້ແຈ້ງແກ່ພິກຂຸທັງຫລາຍ ອາທະກລ່າວ ວ່າ
ພິກຂເວ ດູຣາພິກຂຸທັງຫລາຍ
ສ່ວນອັນວ່າ ນາງອະລັມພູສາ ຕົນອິງອາດ
ອັນອິນທາທີລາດ ທາກຣຽກທາມາ
ອາທະ ກລ່າວຄາກຸາວ່າ "ປິໂຍ ອະລັມພຸເສ"
ດູລາ ນາງຫນໍ່ແກ້ວ ອະລັມພູສາ
ແມ່ນີ້ຮູ້ກະທຳມານຍາ ໂລມຕາຊາຍໃນໂລກ
ໃຫ້ຫາຍໂສກ ດ້ວຍລວງກາມ
ແມ່ນີ້ໂສມກໍງາມ ລ້ຳເລີດ
ແວນປະເສີດ ກວ່ານາງທັງຫລາຍ
ບັດນີ້ ພີ່ກໍເຫັນເຫດອັນບໍ່ດີ ຍັງມີຣັດສີຕົນນ້ອຍຫນຶ່ງ
ຊື່ວ່າ ຣັດສີສິງ ອັນມີຈຸນລາເປັນຄູ່
ເປັນຕຸ່ມ ຢູ່ເຫນືອຫົວ

ເປັນດັ່ງເຂົາລູກງົວ ແລະ ລູກເນື້ອ
ງາມເອື້ອເຄືອເກືງຊານ ໃນຫີມະພານປ່າໄມ້
ທ່ານໄທ້ນັ້ນ ມີສິບ
ຮ້ອຍວ່າຈະມາກຳຈັດ ກູຫນີເຈຍລະຈາກ
ໃຫ້ພີ່ພາກເມືອງສະຫວັນ ບໍ່ຢ່າ ຊະແລ.

ປີເຍ ອະລັມພູສາ
ດູຣານ້ອງນາດໄທ້ ອະລັມພູສາ ພີ່ເຮີຍ
ບັດນີ້ ພີ່ກໍຂໍອັງເຊີນ ຫນໍ່ຮວເຈົ້າ
ຈົ່ງເຂົ້າສູ່ສາລາ
ແຫ່ງມະຫາຣັດສີ ຕົນຫນຸ່ມນ້ອຍ
ນາງຈິ່ງຄອຍເຂົ້າໃກ້ ແຕ່ງມານຍາ
ໃຫ້ຣັດສີ ຄລາຄລາດແຄ້ວ
ຈາກຊານແລ້ວ ລືມສະຕິ ອັນເປັນສິນ
ນາງຈິ່ງສະມາຄົມການໂລກ ດ້ວຍອາໂພກ ການະຄຸນ
ພາຍລຸນຫາຍຜົງເຜົ່າ ນາງແກ້ວເລົ່າຄືນມາ
ກໍພີ່ເທີ້ນ.

ຕັ້ງສຸດວາ ເມື່ອນັ້ນ ນັ້ນນາງອະລັມພູສາ
ໄດ້ຍິນຄຳອິນທາແກ່ນໄທ້ ນົບນອບໄຫວ້ຈາລະຈາ ວ່າ
ອ້າແດ່ ທ້າວໂສມສາຍ ນາງຟ້າຫລາຍເຫລືອແຫລ່
ທ້າວບໍ່ທັນຊາວແມ່ມາຄາ ດັ່ງລື ພະມາ ຈາຄີ້ຄອຍ
ເຊິ່ງຂນ້ອຍຜູ້ດຽວນີ້ຈາ ນາງອະລັມພູສາກ່າວໄຫວ້
ພະບາດໃຫ້ພັນຕາ ອັນວ່ານາງທັງຫລາຍແຫລ່ງຫລ້າ

ຢູ່ຟາກຟ້າວິມານຄໍາ ດູລໍາບໍາສຸດຍິ່ງ
ປະດັບກ້ອນສິ່ງນາໆ ງາມພໍຕາລໍ້າເລີດ
ແວນປະເສີດກວ່າອ້ານີ້ ກໍຍັງຫລາຍ
ພະໂສມສາຍແກ່ນໄທ້ ຈິ່ງໃຊ້ຮີບຍານານ
ໃຫ້ນາງນິງຄານ ໄປກ່ອນ
ໄວ້ຂນ້ອຍມ່ອນ ນໍາຫລັງກໍອ້າເທີ້ນ.
ຕະໂຕໃນກາລະຍາມນັ້ນ ບັ້ນອິນທາເທວະລາດ
ກໍຈິ່ງສວດ ຄາຖາວ່າ
ອະລັມພຸເສ ດູລານ້ອງໜໍ່ແກ້ວ
ອະລັມພູສາ ບໍ່ຄວນຈາມາເຈົ້າ
ນ້ອງແກ່ນເທວີ້າ ຈິ່ງຮໍາເພີງ ແທ້ດີຫລີ
ອັດສຣາ ອັນວ່າ ນາງຟ້າທັງຫລາຍ ເດຍລະດາດ
ທີ່ວ່າເອົາບໍ່ສະລາດ ດ້ວຍມາຍາ
ລອນທີ່ເປັນນາງເທວະດາ ແຫລ່ງຫລ້າ
ຢູ່ຟາກຟ້າວິມານຄໍາ ຊື່ນຊ້ອຍ
ເອົາບໍ່ຮູ້ລະຫ້ອຍ ຊ່າງມາຍາ
ເອົາບໍ່ຮູ້ພາສາຊ່າງຍ້ອງ ໃຫ້ກືກຕ້ອງໃຈຊາຍ
ສາຍໃຈເຮີຍ ເຈົ້າຢ່າໄດ້ຊູຊີຄໍາຫລາກ
ເຫດຮ້າຍທາກຜາກົດ ແລນາ
ອະລັມພຸເສ ດູຮານາງນາດໄທ້ຊາຍາ
ຊື່ອະລັມພຸສາແກ່ນໄທ້ ພີ່ຈັກໃຊ້ເຈົ້າດ່ວນລົງໄປ
ນ້ອງສາຍໃຈຮັກພີ່ ມີລັກຂະນະກ້ວນກີ່ຜືວນວນ

ໂສມສີຄວນອີງອາດ ຄື້ວຄ້ອມຄາດ ຄວນຮັກ
ໂສມສີສັກງາມແງ່ ອົກອາດແຜ່ພໍຄວນ
ກາບານົມທັງຄູ່ເປັນທີ່ຮ້ອນ ວະອູ່ໃຈຊາຍ
ສອງແຂນກົມໄກວກວາດ ນີ້ວມືມາດໄສແສງ
ມີເລັບແດງຊະລ້າຍ ມີທ້ອງຮາບແລະແອວກົມ
ສົມສີໄວຫນຸ່ມຫນ້າ ນາງຍອດຟ້າ ຈິ່ງລົງໄປ
ສູ່ພົງໄພຫີມະເວດ ໃຫ້ເສຍເພດ ແຫ່ງລັດສີ
ເສຍຊານດີທ່ານແລ້ວ ນາງແກ້ວຈິ່ງຄືນມາ
ກໍພີ່ເທີ້ນ.

ຕັງ ສຸຕວາ ນາງອະລັມພຸສາແກ່ນໄທ້
ຂາບໄຫວ້ພະບາດໄທ້ຈອມໄຕ ຫາກຈັກໄປ ບໍ່ວ່າ
ນ້ອງກຳຜ້າແຕ່ງຕາມໃຈ ພະບົວໄຂໃຊ້ຂ້າ
ເທົ່າວ່າ ນ້ອງກຳຜ້າກົວຜິດ ເພື່ອວ່າລັດສີ ຈັກເສຍຕົນ
ແປ່ມ້າງ
ສົນເຈົ້າສ້າງອຸດົມ ຂ້າຈັກໄປຈົມຢູ່ພື້ນອະເວຈີ
ເພາະວ່າໂລມລັດສີ ຕົນສັກສາດ
ໃຫ້ເຈົ້າ ຄລາດຄລາສົນ ກໍຂ້າແລ.
ທີ່ນັ້ນ ບັ້ນອິນທາທິລາດ ໃຫ້ອະນຸຍາດແກ່ໂສມສີ
ກໍມີແລ

"ອິທັງ ວັຕວາ ພິກຂະເວ" ດູລາພິກຂຸທັງຫລາຍ
ສວນດັ່ງນາງໂສມສາຍຟາກຟ້າ ກ້ວນຫນ້າຊື່ອະລັມພຸສາ
ມີວັນນະແຍ້ມຍິ່ງ ງາມຂອດຍິ່ງໂສມສາຍ

ห้ามจำหน่าย

ມີກາຍາ (ມີວາຈາ) ຊ່າງຍ້ອງ ໃຫ້ຊາຍຂ້ອງດ້ວຍຕັນຫາ
ປະວິສິຕວາບາງກໍສະເດັດ ຄລາດແຄ້ວ
ເຂົ້າສູ່ຜາສາດແກ້ວ ທີ່ນອນ
ນາງກັບລະຍາແກ່ນໄຫ້ ທັດດອກໄມ້ ແລະ ອາພອນ
ດູປະວໍຣະວິໂລດ ໜ້າຊ້ອຍໂຊດໄສສີ
ເໝືອນດັ່ງນາງກິນນະລີ ໜຸ່ມເນື້ອ
ງາມເອື້ອເຄື້ອດັ່ງອິນແປງ ນາງສະແວງລົງມາບໍ່ຊ້າ
ເຂົ້າປ່າໄມ້ທີ່ມະພານ ດູຕະການອິງອາດ
ຍົວລະຍາດຍ້າຍລີລາ ມາສູ່ສາລາຕົ້ນມ່ວງ
ໃບບໍ່ຮ່ວງດົກໜາ ຕົ້ນສາຂາວິເສດ
ໃກ້ແທບເຂດ ອາສົມບົດສາລາ
ປາໂຕວາ ເມື່ອເຊົ້າ ນາງບາດເຫງົ້າມາເຖິງ
ກໍມີແລ

- ພິກຂາເວ ດູຣາພິກຂຸທັງຫລາຍ ຝູງຈິບ ໄຕຍະເພດ
ສວນດັ່ງຣັດສີຕົບວິເສດ ຢູ່ໃນຫ້ອງເຂດ ຄີລີ
ໃນລາຕີ ຮຸ່ງເຊົ້າ ເຈົ້າກໍອາບນໍ້າ ສົງສີ ຊໍາລະ ດີລວດແລ້ວ
ເຂົ້າມາສູ່ກູ່ແກ້ວສາລາ ອາປາ ເຈົ້າກໍກືເອົາຕາດນ້ອຍ
ຄ້ອຍໆ ກວາດໂຮງໄຟ ງາມພໍໃຈ ເລີດແລ້ວ
ບັ້ນນາງແກ້ວ ອະລັມພຸສາ ລີລາມາບໍ່ຊ້າ
ຊະຊ່ອນໜ້າສີໃສ ໄກວກາຍໄປຕູ້ເຕື້ອ ໆ
ປະໄປ່ ເນື້ອແປນນົມ ຕາຫລຽວຄົມວາດໄວ້
ມາຢືນຢູ່ໃກ້ພະຣັດສີ ກໍມີແລ

ອກຸະ ໃນກາລະເມື່ອນັ້ນ ບັ້ນເຈົ້າຮັດສິຕິນວິເສດ
ເຫັນເພດນາງອະລັມພຸສາ ມົວຕາຄຸ້ມມືດ
ປິດຜ້າຢ້ຽມຄອຍດູ ເຫັນບຸນຊູແກ່ນໄທ້
ລວດວາງໄວ້ ຍັງຕາດທັ່ງຍູ
ພະບຸນຊູບໍ່ຊ້າ ອ່ວຍຫນ້າສູ່ອິດກີ
ໂສມງາມດີແວ່ນແຄ້ວນ ມາໃຫ້ອີ່ພີ່ແຫນ້ນໃນທວງ
ແລນາ...

ໂອນໍ ກັນລະຍາເຮີຍ ແກ່ນໄທ້
ເຈົ້າຫາກດັ້ນປ່າໄມ້ ທີ່ໃດມາ ກໍພີ່ຈາ
ມາກະທຳມາຍາ ສັງໂຍກ
ໃຫ້ອີ່ພີ່ນີ້ສັງໂຍກດ້ວຍ ລວງກາມ
ເຈົ້າຈິ່ງ ກາມ ນາງນ້ອຍ
ຄ້ອຍໆວ່າ ເຈົ້ານາງນ້ອຍລຸກທີ່ໃດມາ
ມີຄຳຈິນດາວ່າດັ່ງນີ້ ເອໂກ ນຸມພະໂຕ
ຄົນຜູ້ໃດມີຮັດສະຫມີງາມ ຊະແລ້ມ
ຄືດັ່ງສາຍຟ້າແມບ ເຮືອງຮວຍ
ເຫມືອນດັ່ງດາວພະກາຍໃນຟາກຟ້າ ກ້ອນຫນ້າຊື່ວ່າໂລຫິນີ
ນາງກໍປະດັບປະດາດີເລີດແລ້ວ ຕ້າງແກ້ວສອດໂສມສີ
ງາມດີຫລີ ໃຊ່ຊ້າ ຈາແຈ່ມຫນ້າບົວໄຂ
ຕາຫລຽວໄຫລເຫລືອດໄວ້ ທັດດອກໄມ້ມາລາ
ທາຈັນມັນຫອມຫື່ນ ນາງນ້ອຍຊື່ນເປັນສາວ
ຜີງນົງພາວຊ່າງຢ້ອງ ມາໃຫ້ອີ່ພີ່ຂ້ອງດ້ວຍຕັນຫາ ມາກນໍ

| | |
|---|---|
| ອະນຸປຸບເຜ | ແຂນກົມງາມກ່ານປ້ອງ |
| ນິ້ວນ້ອຍສ້ອງເສີມຄໍາ | ຕາດໍາງາມເລີດແລ້ວ |
| ເຫມືອນດັ່ງທ່ອນແກ້ວ | ອັນເກີດໃນສະຫວັນ |
| ດູພະລັນລໍ້າຍິ່ງ | ນາງກິ່ງແກ້ວໂສມງາມ |
| ພີ່ກໍກາມແກ່ນໄຫ້ | ອົກຮ້ອນໄຫມ້ປານໄຟ |
| ເພື່ອວ່າເຫັນສີໃສນ້ອຍນາດ | ເລີຍລວດຂ້ອງຄ່ອງທໍາ |
| ໃຈຈໍານໍາບໍ່ຢູ່ | ນາງແກ້ວກູ່ສະເຫມີຕາ |
| ຫອມຈັບຫາດອກໄມ້ | ນາງນາດໄຫ້ລີງມາ |
| ພະຈິ່ງກ່າວຄາຖາກັບດອມນາງ | ອະລັມພຸສາວ່າ |
| ນາງແກ້ວແກ່ນໄຫ້ | ສະເນຫາພີ່ເຮີຍ |
| ໄດ້ຍິນຄໍາ | ມາຍາຕ່າງໆ |
| ນາງຜ່ອງ | ກະທໍາມາຍາໂລມລ້ຽວ |
| ເກາະກ້ຽວ ກອດເອົາຂອງ | ທັງເງິນທອງ ແລະ ເສື້ອຜ້າ |
| ນາງຜ່ອງ ຮັກສາສິນທ້າ | ເປັນນິດຈະການ |
| ນາງຜ່ອງ ມີໃຈບານ | ດ້ວຍຊື່ |
| ນາງຜ່ອງມັກຫລີ້ນຊູ້ | ຄອງມາຍາ |
| ດູຮາ ນາງບັຕຕາຫນຸ່ມນ້ອຍ | ອໍຣະມອຍຫນ້າດູງາມ |
| ມາມະກອນແກ່ນໄຫ້ | ຮຽກຊື່ໄວ້ວ່າ ສັນໃດ ນີ້ຈາ |
| ຈັກວ່ານາງເທວະດາ | ຢູ່ຟາກຟ້າ |
| ຮູ້ວ່າສາວແຫລ່ງຫລ້າ | ເມືອງຄົນ |
| ມາສິນເທຫວງເຮົາ | ຜູ້ພີ່ນີ້ຈາ |
| ເອວັງ ໃນເມື່ອເຈົ້າ | ຮັດສີຕົນລໍ້າເລີດ |

ລ່ຳບໍ່ເປີດແກ່ຕາ ເຈົ້າກໍມີວາຈາຈີ່ຈ້ອຍ
ຕ້ານຕໍ່ນ້ອຍສາວສະຫວັນ ບາງພະລັບຈາລະຫ້ອຍ
ຕ້ານຕອບກ້ອຍເຈຍລະຈາ ນ້ອງຫາກລຸກແຕ່ຟ້າ ລົງມາ
ຊື່ວ່າ ນາງອະລັມພຸສາ ຊື່ນຊ້ອຍ ຂນ້ອຍເກີດມາແຝງ
ພະຈອມແພງແກ່ນໄທ້ ຢ່າໄດ້ຢູ່ແວນໄກ
ໂສມສີໄວ ບຸ່ມເນື້ອ ເຊື້ອພະເຈົ້າຮັດສີສົມ
ນາງອຸດົມຕົນແມ່ ບຸນບໍ່ແກ່ເປັນສັດ
ອະທິບນາທານ ບໍ່ກວ້າງ
ເຈົ້າບໍ່ໄດ້ສ້າງ ແຕ່ຫລັງຫລາຍ
ພະສົມສາຍຕົນລູກ ບຸນຜູກໄດ້ເປັນຄົນ
ເວນຈຳຈົນຈ່ອງໄວ້ ຈຶ່ງໄດ້ມາ
ຕ້ອງບາດຮ້າຍ ເພື່ອເວນຫລັງ ແລນາ
ຕັງ ສຸຕວາ ສວນດັ່ງມະຫາຮັດສີ ຕົນຫນຸ່ມນ້ອຍ
ຄ້ອຍໆ ໃຄ່ ເຝືອແຝງ ແຍງຈອມແພງບໍ່ເປີດ
ໃຈເຈົ້າຮ້ອນເກີດປານໄຟ ກໍເພື່ອອາໄລດອມ ອ່ອນນ້ອຍ
ຄ້ອຍໆ ໃຄ່ ເຝືອແຝງ
ດອມພະຈອມແພງ ບາດນ້ອຍ
ພະຍອດສ້ອຍຈາຣະຈາວ່າ ໂອນໍ ຝາງທອງເອີຍແກ່ນໄທ້
ຂໍໃຫ້ໄດ້ດັ່ງຄຳປອງ ຣອງ ໆ ຕາ ເຊີດຊາຍ
ຍ້າຍເຂົ້າໃກ້ດູຈົນ ສົນລະວົນເດືອດໄຫມ້
ແຫ່ງແກ່ນໄທ້ ຮັດສີ ສົມ ແລນາ.
ໂອນໍ ພີ່ກໍຫລິງດູກາງນາ ນົມທັງຄູ່

| | |
|---|---|
| ຕັ້ງສະພູ່ | ສະເຫມີດັ່ງຈອມທອງ |
| ຊ່າງຜີປອງຊັກຊຽນ | ປ່ຽນວຽນດ້ວຍພູມອນ |
| ສາຍສະຫມອນເຮີຍ | ສັງມາງາມສຸດຂະຫນາດ |
| ໃຈພີ່ຈະຂາດ | ຕາຍດອມ ແລນາ |
| ສຸທັນຕາ | ແຂ້ວຟັນງາມຮຽງຮາບ |
| ເຫລື້ອມຍິຍາບເປັນແສງ | ຮີມປາກແດງຊ້ອຍໂຊດ |
| ເຫມືອນດັ່ງຫມາກນີໂລດ | ອັບສຸກງາມ |
| ອາຍະຕາຕະ | ສອງຕາດຳຄິເຄືອດ |
| ນາງນ້ອຍເຫລືອດ | ສີມໃຈ |
| ຂໍອັງເຊີນນາງນົງໄວ | ນ້ອຍນາດ |
| ຍົວລະຍາດຍ້າຍເຂົ້າມາ | ສູ່ສາລາແກ້ວກູ່ |
| ນັ່ງຫລົ້ນຢູ່ຕາມໃຈ | ນາງບໍ່ມີອາໄລສັງສັກສິ່ງ |
| ກວາຍແກແກ້ວ | ຈອມມິ່ງຮັດສີສົມ |
| ຜົມໃນຫົວນາງບໍ່ໄວ້ | ກອນອອກໃຫ້ຮອງຕີນ |
| ພະສິນໄສ ແກ່ນເຈົ້າ | ຈັກລະນ້ອງນ້ອຍໄວ້ |
| ກໍທ່ຽງມິ່ງເມືອມອນ ແລນາ. | |
| ນາງກໍມີຄຳຈາເທົ່ານີ້ແລ້ວ | ນາງແກ້ວຈິ່ງຈົບດາວ່າ |
| ຜີວ່າກູບໍ່ຫນີຈາກທີ່ນີ້ | ຮັດສີເຈົ້າກໍບໍ່ເຂົ້າມາ |
| ກູຈັກກະທຳພາສາອັນຕ່າງ | ຈັກຍົກຍ່າງກາຍຫນີ. |
| - ສາອິດກີ ອັນວ່ານາງ | ອະລັມພຸສາ ຜູ້ນັ້ນ |
| ຄັນຮູ້ແລ້ວຍັງໃຈ | ຕິຍ່າງໄປເມືອງມ້າຍ |
| ໂສພາບ ດ້ວຍປັນຍາ | ອະລັມພຸສາກະທຳມາຍາ |

ດັ່ງຈັກຫນີຄືນເຫລົ່າ	ສູ່ທາງເກົ່າຕົນມາ
ຍ່າງໄປສອງສາມວາ	ທຳມາຍາຫລຽວເຫລືອດ
ຕາເຊືອດຊູ້	ຄອຍໄກ ແລນາ
ພິກຂາເວ	ດູຣາພິກຂຸທັງຫລາຍ
ສາ ອັດສະຣາ ອັນວ່າ	ນາງອະລັມພຸສາ ຫນຸ່ມຫນ້າ
ລອດແຕ່ ຟ້າລົງມາ	ມີວັນນາເຮືອງຮຸ່ງ
ເນື້ອພົ້ນພຸ່ງເຮືອງແສງ	ງາມເພີ່ງແພງບໍ່ນ້ອຍ
ຫນ້າຊ້ອຍໂຊດໂສພາ	ກະທຳມາຍາແປງເພດ
ໃຫ້ແກ່ເຈົ້າຈອມເກດ	ຕົນມີສິນ ແລນາ
ພິກຂາເວ	ດູຣາພິກຂຸທັງຫລາຍ
ສາ ອັດສະຣາ ອັນວ່າ	ນາງອະລັມພຸສາຫນຸ່ມຫນ້າ
ລອດແຕ່ຟ້າລົງມາ	ມີວັນນາເຮືອງຮຸ່ງ
ເນື້ອກ້ຽງພຸ່ງຫມາຍແສງ	ງາມເພີ່ງແພງບໍ່ນ້ອຍ
ຫນ້າຊ້ອຍໂຊດໂສພາ	ກະທຳມາຍາແປງເພດ
ໃຫ້ແກ່ເຈົ້າຕົນອິ	ເສດເສຍສິນ ກໍມີແລ
ພິຂາເວ	ດູລາພິກຂຸທັງຫລາຍ
ອິສີ ອັນວ່າເຈົ້າຣັດສີ	ຕົນແຈ້ງຈອດ
ຄັນວ່າເຫັນນາງແກ້ວ	ຍອດລີລາ
ພະກະສັດຕາແກ່ນໃຫ້	ເຈົ້າກໍອົດບໍ່ໄດ້ ຄ່ອຍໄປຕາມ
ເກີງນາງງາມແກ່ນເຫງົ້າ	ຈັບເກດເກົ້າ ຊາດາ
ຊັກນາງມາໃນຫ້ອງ	ກຸມກອດນ້ອງ ອະລັມພຸສາ
ກໍມີແລ.

ຕັງ ມຸດທາ　　　　　　　ນາງອະລັມພຸສາໜຸ່ມເນື້ອ
ງາມເອື້ອເຄືອຄວນແຍງ　　ງາມເພີງແພງຈິດທະຈອດ
ກອດເອົາແກ້ວກຳພ້າ　　　ຮັດສີສິງ ກໍມີແລ
- ຕະທາ ໃນກາລະ　　　　ເມື່ອນັ້ນ
ນັ້ນນາງອະລັມພຸສາ　　　ດວງດອກໄມ້
ຮູ້ວ່າແກ້ວແກ່ນໄທ້ເສຍສິນ　ນາງຍິນດີລວດແລ້ວ
ນັ້ນອິນທາຜູ້ຜ່ານແຜ້ວ　　ຫາກຈຳມາ
ຄຳປາກະນາ　　　　　　ບໍ່ແລ້ວ
ພະຕົບແກ້ວ　　　　　　ຈຶ່ງກົ້ມລົງມາ
ຍັງຊ້ອງຄຳ　　　　　　ອັນວິໂລດ
ກັບທັງຜ້າກັ້ງໂສດ　　　ສະມາຄົມ
ພິດານສົມສະອາດ　　　ອັງຄາດແລ້ວ
ດ້ວຍຜ້າກຳພະລະຜືນແດງ　ໃສງາມແສງສະອາດ
ອັນອິນທາທິລາດ　　　　ຫາກແຕ່ງໃຫ້ລົງມາ
ກວາຍກັນລະຍາໜໍ່ແກ້ວ　　ງາມເລີດແລ້ວ ອະລັມພຸສາ
　　　　　　　　　　　　　　　　ກໍມີແລ.

ຕະເມນັງ ນາງອະລັມພຸສາ　ຍອດສ້ອຍ
ກອດເອົານ້ອຍ　　　　　ແທບກັບອົກ
ນາງກໍຄ່ອຍຍົກຂຶ້ນຍັງ　　ແທ່ນແກ້ວ ອາດບັນລັງ
ອັນມີສີສະອາດດັ່ງອາວາດ　ນິລະພານ
ໃນສະຖານທີ່ນັ້ນ　　　　ສ້ຽງວ່າໄດ້ສາມປີ
ຜີຈັກຄນະນາເປັນປີໃນເມືອງຄົນ　ສາມປີທັດທ່ຽງບໍ່ມີຄລາ

ຜີຈັກຈາເປັນປີ ໃນເມືອງຟ້າ ພໍ່ວ່າໄດ້ຍາມດຽວ
ສິສະຫລຽວແກ່ນໄທ້ ກອດນ້ອງໄວ້ກັບອົກ
ບໍ່ຍົກຍໍຫນີໄດ້ ສ້ຽງວ່າໄດ້ສາມປີ ກໍມີແລ
ຕະຫາ ຕາປັດໂສ ອັນວ່າ ພະລັດສີຕົນເລີດແລ້ວ
ສິນເສບແກ້ວ ອະລັມພຸສາ ຫາໄພມາບໍ່ໄດ້
ພະແກ່ນໄທ້ ຍັງຄອຍສຳລານ
ກໍບໍ່ມີອາການອັນມາບຽດ ສຽດແຈ່ມເຈົ້າອະລັມພຸສາ
ນອນຢູ່ໃນອາສນາ ອັນປະເສີດ
ສຸກລ້ຳເລີດສິ່ງ ເມືອງອິນ ແລນາ
ອິສີ ອັນວ່າ ເຈົ້າລັດສີ ຕົນຊື່ນຊ້ອຍ
ກອດອ່ອນນ້ອຍ ອະລັມພຸສາ
ສອງພິມພາຮວມຫ້ອງ ໄດ້ກຶກຕ້ອງການສເນຫາ
ນາງເທພາລືມເພດ ດອມເຈົ້າຕົນວິເສດລັດສີສິນ
ນາງອຸດົມກຸມກອດໄວ້ ຍັງແກ້ວແກ່ນໄທ້ບໍ່ມີວາງ
ດູບີກບາງເຫລືອງຫລາເພດ ແຫ່ງເຈົ້າຕົນວິເສດທັງສອງ
ຕອງຕອຍຫມອງ ຫມິ່ນເສົ້າ
ບໍ່ຮູ້ທີ່ເຂົ້ານ້ຳ ແລະ ອາຫານ ເຈຍລະການມີມາກ
ບໍ່ພາກອ້າງໄກກັນ ເຫມືອນດັ່ງສັກກຸນີແຂກແກ້ວ
ບິນສອດແສ້ວໄປມາ ຈັບສາຂາງ່າໄມ້
ຕົນແມ່ໄດ້ສາຂາ ສັກກຸນາຊ່າງເວົ້າ
ຕໍ່ແກ່ນເຫງົ້າ ເຫມືອນດັ່ງພາສາ
ຄວາມເປັນມາຂອງຄົນໃນໂລກ ຮູ້ອາໂພກ ດອມເມຍ

| | |
|---|---|
| ເປັນເນຍນ່ຳ ໆ | ຮ້ອງຍາມຄ່ຳອອນຊອນ |
| ເຫມືອນດັ່ງພະພູທອນ | ອ່ອນນ້ອຍ |
| ກັບທັງນາງຍອດສ້ອຍ | ອະລັມພຸສາ ນີ້ ແລນາ |
| ຕັງ ສຸຕວາ ເມື່ອນັ້ນ | ນັ້ນມະຫາລັດສີ ຕົນວິເສດ |
| ສົມເສບກາມະຄຸນ | ກັບນາງລຸນແກ່ນແກ້ວ |
| ເສຍຊານແລ້ວດີຫລີ | ນອນຫລັບດີຢູ່ຫ້ອງ |
| ມືກອດນວດນ້ອງສາຍສະຫມອນ | ຄອນໆ ຫລັບສະນິ່ງ |
| ເລີຍເລົ່າກິ້ງໄປມາ | ນາງຈິ່ງຍໍປ່ຳທາພາດໄວ້ |
| ນາງຄ່ອຍໃຊ້ກະພູມມີ | ນາງກໍໃຈອອກໄດ້ |
| ລະແກ່ນໄທ້ລັດສີ | ຫນີມາຢືນລັບຢູ່ |
| ສະພູ່ຫນ້າລັດສີສິງ | ຕື່ງໄປມາເລີຍຕື່ນ |
| ເຈົ້າຊື່ນແລ້ວລ່ຳໄປມາ | ເຫັນເຄືອເຂົາ ແລະ ຕົ້ນ ໄມ້ |
| ຮີກເຮື້ອໄດ້ສາມປີ | ມະຫາລັດສີຈິນດາ ຈີໃຈ້ໆວ່າ |
| ໂອນໍ ຍິງຜູ້ໃດ | ໃນໂລກາແຫ່ງຫ້ອງ |
| ດັ້ນເກື່ອນກອງ | ມາຫາ |
| ສູ່ສາລາແກ່ນແກ້ວ | ເສຍສິນແລ້ວທັງຊານ |
| ພະພູບານຮ້ອງໄຫ້ | ຄຶດຮອດໄທ້ພໍ່ຕົນສອນ |
| | ກໍມີແລ |
| ທັດສະນັງ | ເຈົ້າພະລັດສີແກ່ນໄທ້ |
| ເຫັນປ່າໄມ້ເປັນດອກຈູມຈີ | ພະພູມີຊຶມຊື່ນ |
| ຝູງນົກຕື່ນຈາກັນ | ກາເວົ້າຍັນຈີໃຈວ້ໆ |
| ເຈົ້າກໍຮ້ອງຮ່ຳໄຫ້ໂສກາ | ເຊັດນ້ຳຕາບໍ່ຂາດ |

ພະບາດເຈົ້າຄຶດຮຸງ ພາຍຫລັງວ່າ
ໂອນໍ ກໍາສຸດລັດສີແກ່ນໄທ້ ສອນລູກໄວ້ບໍ່ມີຟັງ
ເອວັງໃນເມື່ອເຈົ້າລັດສີແກ່ນໄທ້ ຮ້ອງຮ່ຳໃຫ້ຕໍ່ພາຍຫລັງ
ມີເຊັດນ້ຳຕາຈີແຈ້ວໆ ຄຶດຮອດແລ້ວຄໍາພໍ່ຕົນສອນ
ທົບສະອອນມີມາກ ງວາກໜ້າເຫັນທຸກພາຍ
ຄຶດໄປຫລາຍແຄ້ນຄັ່ງ ນ້ຳຕາຫລັ່ງໄຫລຕົກ ແລນາ
ໂອນໍ ຮອຍວ່າກູ ບໍ່ໄດ້ບູຊາສັກຄາບ
ຮອຍວ່າກູບໍ່ໄດ້ ອາບນ້ຳສ່ວຍສົງສີ
ເວນບໍາມີມາຮອດ ຮອຍວ່າກູບໍ່ໄດ້ຂອດເກົ້າ
ເປັນຊາດາ

ຮອຍວ່າ ກູບໍ່ໄດ້ເມດຕາ ພາວະນາຊູຊອຍ
ຮອຍວ່າກູບໍ່ໄດ້ ປ່ອຍໂພດຝູງສັດ
ອັນມີແຕ່ຊາດກ່ອນ ລະນ້ອຍມອນເປັນພອຍ
ຕອງຕອຍໜມອງ ໝິ່ນເສົ້າ
ເສຍທັງຄອງວັດເຈົ້າ ແລະ ສິນທຳ
ເຈົ້າກໍຈົ່ມພໍາໆ ພ້ອຍໆ ລັດສີນ້ອຍຮ່ຳເຮຣີນ
ໃນເມື່ອກູຍັງທົວລະພົນແທບໄທ້ ໃນປ່າໄມ້ຕົນດຽວ
ກາງໄພຂຽວປ່າກວ້າງ ບໍ່ມີໃຜເພື່ອນຂ້າງພໍສອງ
ແລນາ

ໂອນໍ ບຸກຄະລະຜູ້ໃດ ມາກະທຳພະທຸລັງໃຈບາບ
ມາກໍາຮາບໃຫ້ເສຽສົມ ອັນອຸດົມເລີດແລ້ວ
ເໝືອນດັ່ງຜີເສື້ອນ້ຳ ອັນຢູ່ໃນສະມຸດທະສາຄຣະຄຸງຄາ

ວາໂຍ ອັນລືມໃຫຍ່ ອູ້ມກຸ້ມໃສ່ນາວາ
ເພຕາເລີຍຫລຸບຫລົ້ມ ຫລົບບໍ່ມື້ມຈາກມືມັນ
ແທ້ດີຫລື

ອຸປະມາດັ່ງອິດທີໃນໂລກ ຕົນຫາໂຍກມາຍາ
ເລີຍໂລມຕາ ເປັນບ້າ
ມາໃຫ້ແກ້ວກຳພ້າ ເສຍສິນນີ້ຈາ
ໂອນໍພະປິດຕາເອີຍຕົນພໍ່ ອັນເປັນຫນໍ່ລັດສີ
ຄອງວັດມີບໍ່ໂທດ ມັກໃຫ້ເປັນປະໂຫຍດດ້ວຍ
ນາໆ

ສັ່ງປຸດຕາລູກແກ້ວ ແຈ້ວໆຈື່ງຈຳດີ
ເຈົ້າຍັງເປັນລັດສີເມືອຫນ້າ ລູກກຳພ້າພໍ່ຕົນດຽວ
ທຽວສິງສານຮ້າຍຫລາຍສິ່ງ ພໍ່ຈື່ງກາວຄຳດີວ່າໄວ້
ລູກແກ່ນໄທ້ຈົ່ງຫລີງໄປ ເຫັນຄົນໃດບໍຣິຍາດ
ຍາໄດ້ເຂົ້າລຸອຳນາດ ແຫ່ງອິດທີມາຍາ
ພະປິດຕາສັ່ງໄວ້ ກູກໍບໍ່ໄດ້ກະທຳຕາມ
ແທ້ດີຫລື

ຕັດສະທັງສວນດັ່ງ ຫົວໃຈກູນີ້ກອຍຊ້າ
ກໍຈື່ງໄດ້ກົ້ມຫນ້າຢູ່ຕົນດຽວ ໃນໄພຂຽວບໍ່ມີຜູ້ເພື່ອນ
ທຸກເກື່ອນກ້ຳ ພູຜາ
ໃນໄພຫນາຫາດຫ້ວຍ ທັງປ່າກວ້ຍແລະ ເຫວຊັນ
ສັພພະສັນແຫ່ງຫັ້ນ ໃນທ່ານ້ຳພູຜາ
ໃນສາລາທຸກແຈ່ງ ແມ່ນ້ຳໃຫຍ່ແຄມຊິນ

| | |
|---|---|
| ໃນໄພສິນທິມະເວດ | ເຈົ້າຕົນວິເສດລັດສີ |
| ໄດ້ສະຕິດີດັ່ງເກົ່າ | ກວດເກົ້າເປັນຊາດາ |
| ທະລຶງສີລາເລີດແລ້ວ | ໃນສະກຸານແກ້ວແກ່ນ |
| | ສາມປະການ |
| ໃຫ້ເປັນປະຫມານ | ດັ່ງເມື່ອກ່ອນ |
| ບັດນີ້ ພະບໍ່ຢ່ອນພາວະນາ | ໃຫ້ໄດ້ຊານມາດັ່ງເກົ່າ |
| ສືບເຊື້ອເຫລົ່າ | ແທ້ດີຫລີ |
| ກູລັດສີຍັງມີຊີວິດ | ຕິດກັບດ້ວຍກິເລດຕັນຫາ |
| ມາຍາອັນເປັນໂທດ | ຈັກເສຍປະໂຫຍດແຫ່ງຕົນ |
| | ແທ້ດີຫລີ ແລນາ |
| ມາກູ ຈັກກະທຳ | ສັນຍາດັ່ງເກົ່າ |
| ໃຫ້ໄດ້ສືບເຫລົ່າຄືນມາ | ກູຈັກພາວະນາ ຈີໄຈວ້ ໆ |
| ຜິວ່າກູຫາກບໍ່ໄດ້ສືບ | ແລະຊານມາດັ່ງເກົ່າ |
| ກໍເພື່ອຈັກມໍຣະນາດ | ເຫລົ່າຕາຍໄປ |
| ໃນພົງໄພປ່າກວ້າງ | ໃຫ້ກູສວ່າງອາຣົມ |
| ລັດສີສົມ ຕົນວິເສດ | ກຳຈັດກິເລດ ຫມູ່ຕັນຫາ |
| ລວດບັງເກີດຊານ ມາດັ່ງເກົ່າ | ມີສິນເຫລົ່າສອງທີ ແລນາ |
| ອະກຸະ | ໃນກາລະເມື່ອນັ້ນ |
| ບັນຣັດສີສິງຕົນລ້ຳເລີດ | ກຳພ້າເກີດຕົນດຽວ |
| ໃນໄພຂຽວປ່າໄມ້ | ຣ້ອງຮ່ຳໄຫ້ເຣຣົນ |
| ຕີອົກຕົນລົ້ມກຸາວ | ດິ້ນດັ່ນດ່າວໄປມາ |
| ຕັງ ສຸຕວາ ເມື່ອນັ້ນ | ບັ້ນນາງອະລັມພຸສາ |

ຜູ້ກະທຳມາຍາສາໂຫດ ທຳໂຫດຮ້າຍນາໆ
ວ່າກູຈັກຈາຍັງຄຳອັນດີ ອັນບໍ່ມີໃຫ້ພະຣັດສີເປັນໂທດ
ມີປະໂຫຍດແກ່ເຈົ້າດີຫລີ ນາງແພງສີຮັບໄວ້
ບໍ່ໃຫ້ແກ້ວແກ່ນໄທ້ລັດສີເຫັນ ຈຶ່ງກ່າວເປັນຄາຖາວ່າ
"ດູຣາ ເຈົ້າລັດສີສິງ ຕົນກຳພ້າ"
ຂ້ານີ້ເປັນນາງຟາກຟ້າ ກ້ວນຫນ້າຊື່ອະລັມພຸສາ
ພະຍາອິນທາເຈົ້າຟ້າ ໃຊ້ໃຫ້ຂ້ານ້ອຍລົງມາ
ກະທຳມາຍາ ໂລມເລົ້າ ແກ່ທ້າວຜູ້ເຜົ່າ ລັດສີສົມ
ແລນາ

ເອວັນຕະ ໃນເມື່ອເຈົ້າລັດສີ ໄດ້ຍິນຄຳອິດຖີຂາບໄຫວ້
ພະບາດໄທ້ພູທອນ ຈຶ່ງກ່າວຄຳສອນພໍ່ສັ່ງເຈົ້າ
ເວົ້າແຕ່ເຄົ້າເກິງປາຍ ຕາມກົດຫມາຍໃຫ້ຮູ້
ກູເຜົ່າຜູ້ບໍ່ໄດ້ ກະທຳຕາມ ແລນາ.
ຕັງ ສຸຕວາ ນາງອະລັມພຸສາ ແກ່ນໄທ້
ຮູ້ວ່າພະລັດສີໄດ້ ຊານມາສອງເຫລົ່າ
ຍິ່ງກວ່າເກົ່າ ພາຍຫລັງ
ອະຫັງ ອັນວ່າຂ້າ ແກ້ວກຳພ້າອະລັມພຸສາ
ຂໍສົມມາເຈົ້າແດ່ ຂນ້ອຍແຜ່ກະທຳຜິດ
ທຸດຈະ ລິດເປັນຄອງສາໂຫດ ຂໍເຈົ້າໂຜດປານີ
ເຈົ້າຈິ່ງທະລົງເປັນຊີເທົ້າເກົ້າ ຍືນທ່ຽງເທົ້າເທຍລະຄາ
ກໍຂ້າ ເທີ້ນ.

"ຕະມັດກັງ ປະກາເສນໂຕ ສັດກາອາຫະ

ພິກຂະເວ" ດູຣາພິກຂຸທັງຫລາຍ
ບັດນີ້ ຈັກກ່າວເຖິງ ນາງຟາກຟ້າ
ກ້ອນໜ້າວ່າ ອະລັມພຸສາ ມາກະທຳມາຍາຊ່າງເວົ້າ
ໃຫ້ພະລັດສີເຈົ້າເສຍຊານ ພາຍລຸນໄດ້ຊານມາດັ່ງເກົ່າ
ນາງນ້ອຍເຫລົ່າຈາຣະຈາ ທູນປາຫາຂາບໄຫວ້
ພະແກ່ນໄທ້ເຫນືອຫົວ ຂ້າກໍກົວໂພຍໄພເມືອໜ້າ
ນ້ອງກຳພ້າ ອະລັມພຸສາ
ຍາມເມື່ອຂໍສີມມາ ອະນຸຍາດ
ຂໍພະບາດໄທ້ລັດສີ ຕົນມີບຸນ ລ້ຳເລີດ
ປະເສີດຍິ່ງຫນັກຫນາ ຢ່າໄດ້ມີໂກທາແກ່ນ້ອງ
ຢ່າມີບາບແລ່ນຕ້ອງ ອະລັມພຸສາ
ຍາມເມື່ອ ສອງຣາ ເສບຕັນຫາ ດອມກັນຈີ້ຈອຍ
ເຈົ້າຢ່າໄດ້ຄຽດຄ້ອຍຂືນໃຈ ກໍຂ້າເທີ້ນ
ໃນເມື່ອນາງອະລັມພຸສາ ຂໍສີມມາອະນຸຍາດ
ພະບາດໄທ້ ລັດສີສິງກໍມີແລ.
ຕະໂຕ ເມື່ອນັ້ນ ບັ້ນລັດສີສິງຕົນບຸນມາກ
ຈິ່ງອອກປາກຈາຣະຈາ ກັບດອມນາງອະລັມພຸສາວ່າ
ພັດເຫ ດູຣາ ນາງຫນໍ່ແກ້ວ
ຄັນວ່າເຈົ້າຫາກເມືອຮອດແລ້ວ ເມືອງສະຫວັນ
ເຈົ້າຈິ່ງມີປັນຍາ ກ່າວເວົ້າ
ແກ່ພະບາດເຈົ້າອິນທາ ກໍພີ່ເທີ້ນ
ຕັງ ສຸຕວາ ນາງອະລັມພຸສາ ແກ່ນໄທ້

ນົບນອບໄຫວ້ ລັດສີສີງ
ນາງອຳລາສັ່ງແລ້ວ ພາກແກ່ນແກ້ວໂດຍພະລັນ
ຂຶ້ນສູ່ເມືອງສະຫວັນ ແຫລ່ງຫລ້າ
ນາງກຳພ້າ ຮອດເມືອງຕົນ ກໍມີວັນນັ້ນແລ
ພິກຂະເວ ດູຣາພິກຂຸທັງຫລາຍ
ຈົ່ງຟັງຍັງນິຍາຍອັນນີ້ ໃຫ້ແຈ້ງເຫດແຫ່ງເຈົ້າລັດສີ
ນາງກໍເມືອຂາບໄຫວ້ ພະບາດໄທ້ອິນທາ ວ່າ
"ຂ້າແດ່ພະເຫນືອຫົວ ເປັນເຈົ້າ
ເວົ້າໃຫ້ຂ້າໄປລອງ ຂ້າກໍໄປພຽນປອງໄດ້ແລ້ວ
ເສຍສິນແກ້ວ ແຫ່ງລັດສີ
ຂໍແກ່ພະພູມີອະນຸຍາດ ຝູງບາບ ແລະກຳເວນ
ກໍຂ້າເທີ້ນ"

ອະກະໃນກາລະເມື່ອນັ້ນ ບັ້ນອິນທາ
ໄດ້ຍິນຄຳນາງອະລັມພຸສາ ຂາບໄຫວ້
ຕົນທ່ານໄທ້ໃຫ້ພອນ ແກ່ນາງອັນປະເສີດ
ນາງແກ້ວເລີດ ໂສມສີ ໄດ້ພອນດີຊົມຊື່ນ
ພະຈິ່ງຍື່ນຍໍມາ ສັບພະພູສາ ມີທຸກພາກ
ທ້າວໄທ້ຫາກກູນາ ໃນຕາວະຕຶງສາ ຟາກຟ້າ
ຜິວຜ່ອງຫນ້າວັນຄຳ ຂໍພະຢ່າຈຳໄປສອງເຫລົ່າ
ໂລມລັດສີແກ້ວເກົ່າສອງທີ ຂ້າຂໍດອມພະຈອມສີຈ້ອຍໆ
ຂ້າກໍຂໍດອມ ພະຍອດສ້ອຍປາງດຽວ
ກໍຂ້າເທີ້ນ.

ເມື່ອນັ້ນ ນາງກໍຮັບເອົາພອນ ດີຕໍ່ໜ້າ
ແຫ່ງອິນທາເຈົ້າຟ້າ ໂຜດກູນາ ກໍມີແລ
ສັດກຸາ ອັນວ່າ ສັບພັນຍູເຈົ້າ ກໍປະວຸດຕິ ເທສະນາ
ແກ່ພິກຂຸໝູ່ມ ເນື້ອກໍຮຽງຊຸມດ້ວຍຕັນຫາ
ພະກໍປະວຸດຕິເທສນາ ໃຫ້ແຈ້ງ
ດ້ວຍແຫ່ງຫ້ອງ ພາຍຫລັງມາ
ຕະທາໃນກາລະ ຍາມນັ້ນ
ນາງອະລັມພຸສາ ມີປັນຍາອັນລ້ຳເລີດ
ໃຫ້ລັດສີຕົນປະເສີດ ເສຍຊານ
ໃນປ່າຫິມະພານ ແຫລ່ງຫລ້າ
ນາງຟ້າບໍ່ໄຊຄົນໃດ ຄືວ່າທຸຕິຍາ ເມຍເກົ່າ
ຫາກມາເລົ່າໂລມຕາ ປາງນັ້ນແລນາ
ອິສີ ອັນວ່າເຈົ້າລັດສີ ອັນມີຈຸລາທັງຄູ່
ເຈົ້າຫາກຢູ່ຕົນດຽວ ໃນໄພ ຂຽວປ່າໄມ້
ນາງນາດໃຫ້ອະລັມພຸສາ ໂລມມາຍາຊ່າງເວົ້າ
ພະບາດເຈົ້າເສຍຊານ ພາຍລຸນມາອະທິການ
ເອົາໄດ້
ພະແກ່ນໃຫ້ ບໍ່ໃຊ່ຄົນໃດ
ກໍຫາກແມ່ນລາຫູລະ ກຸມມານໃນກາລະບັດນີ້
ແລນາ
ຕາປະໂສ ອັນວ່າເຈົ້າ ລັດສີຕົນພໍ່
ສອນລູກໜໍ່ລັດສີສິງວັນນັ້ນ ບໍ່ໃຊ່ຄົນໃດໄຄຕ່າງໜ້າ

ອະຫັງເອວະ ກໍຫາກແມ່ນ ພະຕະກາຄະຕະ ຕົນນຳສັດ
ຕະໂລກ

ໃຫ້ພົ້ນຈາກອົງຄະ ສົງສານ
ໃຫ້ໄດ້ເຖິງນິລະພານ ເປັນທີ່ແລ້ວ ກໍມີແລ
ຕຸມເຫ ພາວັນຕາ ສູທ່ານທັງຫລາຍເຮີຍ
ທ່ານຍັງປາກຸນາ ເຖິງສຸກສາມປະການກໍ່ກວ້າງ
ຈິ່ງເອົາກັບກໍ່ສ້າງກຸສົນທຳ ຈົ່ງກະທຳສຳມະນະທຳ
ທຸກເມື່ອ

ຢ່າເບື່ອຂາດກະທຳພຽນ ຄືວ່າການສູດຣຽນຢ່າຄ້ານ
ສົມເສບສ້າງ ພາວະນາ
ໃຫ້ໄດ້ເຖິງອໍຣະຫັນຕາ ດ້ວຍງ່າຍ
ຢ່າໄດ້ຂາດຈາກ ພຸທທະສາສນາ
ຈົ່ງຮັກສາສິນຫ້າ ແລະ ສິນແປດ ຢ່າໃຫ້ຂາດ
ຢ່າປະຫມາດການບຸນ ເກີດເປັນຄົນກໍໄດ້ຍາກ
ອົງຄະລ້ວນ ກ້ວນທຸກພາກນາໆ
ໄດ້ເກີດມາພົບພະສາສຫນາ ພະພຸດທະເຈົ້າ
ກໍຫາກເປັນບຸນແຕ່ເຄົ້າ ທ່ຽງນັກແທ້ ແຕ່ພາຍຫລັງ
ທັງຍິງຊາຍ ນ້ອຍໃຫຍ່ ຟັງແລ້ວໃຫ້ໃສ່ໃຈຈຳ
ປະຕິບັດຕາມທຳທຸກເມື່ອ ແທ້ດີຫລີ
ຢ່າໄດ້ກິນແຫນງ ທ່ຽງວ່າຈັກໄດ້ນອນແຝງ
ນາງຟ້າ

ກໍທ່ຽງວ່າ ຈັກໄດ້ເຫັນຫນ້າ

ພະເຈົ້າຕົນຊື່ວ່າ ອະຣິຍະເມດໄຕ
ໃນກາລະອັນຈັກມາພາຍໜ້າ ບໍ່ຢ່າຊະແລ.
ອັນວ່າຊາດົກອັນນີ້ຮ້ອຍສິບສ້ອຍ ອັກຂະຣະດ້ວຍບາດ
ເປັນໂອວາດໄສສຸດ ບໍ່ພິລຸດຈັກແຫ່ງ
ບໍ່ຜິດແຜ່ງດີກາ ອອກມາໃນຈັດຕາຣິດ
ເຮົາກໍສະແຫວງຂີດໄວ້ ເປັນໂວຫານ
ກໍສີມລິດທີດ້ວຍປະກາບ ດັ່ງກ່າວ ມານີ້ກໍມີແລ
ອິຕິ ສີງຄະຊາຕະກັງນິຖິຕັງ ກໍແລ້ວ ເທົ່ານີ້ກ່ອນແລ.

# ຜົນງານການພິມ ຂອງ ໂຄງການປົກປັກຮັກສາ ໜັງສືໃບລານລາວ :

❀ **ສຸພາສິດບູຮານ**

*ຮົບໂຮມໂດຍ ມະຫາສິລາ ວີຣະວົງສ໌*

❀ **ສ້ອຍສາຍຄຳ**

*ລິດຈະນາໂດຍ ອາຈານສຳລິດ ບົວສີສະຫວັດ*

❀ **ແບບຮຽນໄວອັກສອນທຳ ເຫລັ້ມ 1**

*ຮຽບຮຽງໂດຍ ພະອ່ອນແກ້ວ ສິດທິວົງ*

❀ **ຄຣວາສປະຕິບັດ**

*ລິດຈະນາໂດຍ ມະຫາສິລາ ວີຣະວົງສ໌*

❀ **ຜະຫຍາຍ່ອຍ**

*ຮົບໂຮມໂດຍ ມະຫາບຸນຍົກ ແສນສຸນທອນ*

## ຊີວະປະຫວັດຫຍໍ້

## ມະຫາບຸນຍົກ ແສນສຸນທອນ



ເກີດເມື່ອ ວັນທີ 6/3/1932 ທີ່ບ້ານທ່າໂພໃຕ້ ຕາແສງດອນສົມ ເມືອງໂຂງ ແຂວງຈຳປາສັກ ສຳເລັດການສຶກສາຈາກໂຮງຮຽນປາລີຊັ້ນສູງ ວັດອົງຕື້ ວຽງຈັນ ແຕ່ປີ 1957.

ປີ 1958-59 ເປັນອາຈານສອນ ຢູ່ໂຮງຮຽນມັດທະຍົມສົງ ວັດສີຖານເໜືອ.

ປີ 1960-64 ເປັນອາຈານສອນ ຢູ່ໂຮງຮຽນປາລີຊັ້ນສູງ ວັດອົງຕື້.

ປີ 1965-75 ເປັນອາຈານສອນ ຢູ່ສະຖາບັນການສຶກສາພຸດທະສາດສະໜາ ວັດອົງຕື້ມະຫາວິຫານ.

ປີ 1976-92 ເປັນອາຈານສອນ ຢູ່ໂຮງຮຽນສ້າງຄູສົງຊັ້ນກາງ ຢູ່ວັດອົງຕື້ມະຫາວິຫານ.

ປີ 1993 ອອກຮັບເບັ້ຍບຳນານ, ວິຊາທີ່ເຄີຍສິດສອນ ພາສາປາລີ, ທຳມະ, ສາດສະໜາສາກົນ, ວັນນະຄະດີ, ການແຕ່ງກາບກອນ.

ປັດຈຸບັນ : ເປັນທີ່ປຶກສາ ປະຈຳໂຄງການປົກປັກຮັກສາໜັງສືໃບລານລາວ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ.